ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 25 ຫາ 29 ກັນຍາ 2023




ການຢັ້ງຢືນ ເຕັກນິກວິຊາການ ດ້ານການປູກພືດເປັນສິນຄ້າ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້






# ການຢັ້ງຢືນ ເຕັກນິກວິຊາການ ດ້ານການປູກພືດເປັນສິນຄ້າ

ປຶ້ມແນະນຳ ກ່ຽວກັບການຄຸ້ມຄອງການດຳເນີນກິດຈະການດ້ານການປູກຝັງໃນມາດຕາ 6, 7, 8,9,10 ກ່ຽວກັບການອອກໃບຢັ້ງຢືນເຕັກນິກວິຊາການດ້ານການປູກພືດເປັນສິນຄ້າ ກ່າວໄວ້ວ່າ:

ຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດ ຕ້ອງປະກອບບົດວິພາກເສດຖະກິດ-ເຕັກນິກການປູກພືດເປັນສິນຄ້າ ໂດຍອີງຕາມ ພາກທີ II, ມາດຕາ 5 ຂອງບົດແນະນຳສະບັບດັ່ງກ່າວ ເພື່ອເປັນບ່ອນອີງໃນການຂຽນບົດ ແລະ ສະເໜີ ຫາຂະແໜງການປູກຝັງ ເພື່ອຄົ້ນຄວ້າ ແລະ ລົງກວດກາ ພື້ນທີ່ຕົວຈິງ;

ຕ້ອງຜ່ານການລົງກວດກາພື້ນທີ່ຕົວຈິງ ກ່ອນເປີດກອງປະຊຸມວິຊາການ ໂດຍຂະແໜງການປູກຝັງເປັນເຈົ້າການ ໃນການປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນທ້ອງຖິ່ນ.

ຈັດກອງປະຊຸມ ຜ່ານບົດວິພາດເສດຖະ ກິດ-ເຕັກນິກ ການປູກພືດເປັນສິນຄ້າ ໂດຍມີພາກ ສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ ເພື່ອຄົ້ນຄວ້າປຶກສາຫາລື ແລະ ອອກໃບຢັ້ງຢືນເຕັກນິກວິຊາການ;

ການຄົ້ນຄວ້າ ແລະ ພິຈາລະນາ ອອກໃບຢັ້ງຢືນເຕັກນິກວິຊາການດ້ານການປູກພືດເປັນສິນຄ້າໃຫ້ແກ່ຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດຈະພິຈາລະນາອອກພາຍໃນ 10 ວັນ ລັດຖະການ ພາຍຫຼັງສຳເລັດກອງປະຊຸມວິຊາການເຊິ່ງສາມາດອອກໃຫ້ໄດ້ 2 ຂັ້ນຄື: ຂັ້ນສູນກາງ (ກົມປູກຝັງ) ແລະ ຂັ້ນແຂວງ, ນະຄອນຫຼວງ (ຂະແໜງປູກຝັງ).

ເມື່ອໃບຢັ້ງຢືນເຕັກນິກວິຊາການ ດ້ານປູກພືດເປັນສິນຄ້າອອກໃຫ້ໂດຍຂະແໜງປູກຝັງ ເພື່ອຢັ້ງຢືນຄວາມຖືກຕ້ອງ ທາງດ້ານເຕັກນິກວິຊາການປູກຝັງ ແລະ ເປັນບ່ອນອີງໃຫ້ແກ່ພະນັກງານວິຊາການ ໃນການຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດຂອງຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດໃຫ້ປະຕິບັດຕາມບົດວິພາກເສດຖະກິດ-ເຕັກນິກ ກຳນົດໄວ້ພ້ອມທັງເປັນບ່ອນອີງໃນການສະເໜີຂໍໃບອະນຸຍາດ ດຳເນີນກິດຈະການກະສິກຳ ແລະ ປ່າໄມ້ ແລະ ໃບຢັ້ງຢືນບົດວິພາກເສດຖະກິດ-ເຕັກນິກການປູກພືດເປັນສິນຄ້າ ຈາກຂະແໜງການກະສິ


ໃບຢັ້ງຢືນ
ເຕັກນິກວິຊາການ ດ້ານການປູກພືດເປັນສິນຄ້າ


ໃບຢັ້ງຢືນ
ເຕັກນິກວິຊາການ ດ້ານການປູກພືດເປັນສິນຄ້າ

ກຳ ແລະ ປ່າໄມ້.

ສຳລັບຄ່າທຳນຽມ ແລະ ບໍລິການໃນການອອກໃບຢັ້ງຢືນເຕັກນິກວິຊາການດ້ານການປູກພືດເປັນສິນຄ້າ ປະກອບດ້ວຍ: 1. ຄ່າໃບຢັ້ງຢືນເຕັກນິກວິຊາການດ້ານການປູກຝັງ 150.000 ກີບ ແລະ ຄ່າກວດແກ້ ແລະ ຮຽບຮຽງເອກະສານ ໃຫ້ປະຕິບັດຕາມ ລັດຖະບັນຍັດຂອງປະທານປະເທດ ກ່ຽວກັບຄ່າທຳນຽມ ທີ່ປະກາດໃຊ້ໃນແຕ່ລະໄລຍະ, ສ່ວນຄ່າບໍລິການດ້ານວິຊາການ ໃນການລົງຕິດຕາມ, ກວດກາພື້ນທີ່ຕົວຈິງ,ຕ່າໃຊ້ຈ່າຍ ໃນການຈັດກອງປະຊຸມວິຊາການແມ່ນຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດ ເປັນຜູ້ຮັບຜິດຊອບທັງໝົດ ເຊິ່ງຄິດໄລ່ງົບປະມານການໃຊ້ຈ່າຍຕາມຂໍ້ຕົກລົງ ຂອງກະຊວງການເງິນ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍ ງົບປະມານຂອງລັດ ສະບັບເລກທີ 2066/ກງ ລົງວັນທີ 25/06/2015 ຫຼື ຄິດໄລ່ຄ່າບໍລິການດ້ານວິຊາການຕາມແຕ່ລະໄລຍະ ການປັບປຸງແປງຂອງກະຊວງການເງິນກຳນົດໄວ້.

***ຂໍ້ມູນອ້າງອີງມາຈາກ***: ບົດແນະນຳ ກ່ຽວກັບການຄຸ້ມຄອງການດຳເນີນກິດຈະການດ້ານການປູກຝັງ, ພະແນກ ຄຸ້ມຄອງການປູກຝັງ, ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 1393/ກປຝ, ລົງວັນທີ 07 ກໍລະກົດ 2017.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;